ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 6557 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 29/3/2019

# ຂໍ້ແຂ່ງຂັນ

- ອີງຕາມ ວິໄສທັດຂອງກະຊວງ ຍທຂ ເຖິງປີ 2030, ແຜນຍຸດທະສາດ ແຕ່ປີ 2016-2026 ແລະ ແຜນພັດທະນາ ຂອງຂະແໜງ ຍທຂ 2016-2020.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 6555/ຍທຂ, ລົງວັນທີ 29/03/2019 ວ່າດ້ວຍການແບ່ງຄວາມຮັບຜິດຊອບວຽກງານວິຊາສະເພາະ ຕາມທິດສາມສ້າງ ລະຫວ່າງກົມຂົວທາງ, ກົມຂົນສົ່ງ, ກົມເຄຫາ ແລະ ຜັງເມືອງ, ກົມນໍ້າປະປາ, ກົມທາງນໍ້າ ແລະ ກົມການບິນພົນລະເຮືອນ ກັບພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ.
- ອີງຕາມ ການຕົກລົງເຫັນດີຂອງກະຊວງ ຍທຂ ກັບບັນດາພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ໃນກອງປະຊຸມ ຍທຂ ທົ່ວປະເທດ ປະຈໍາປີ 2018, ລົງວັນທີ 28-29/03/2019 ທີ່ນະຄອນຫຼວງວຽງຈັນ.

ເພື່ອສືບຕໍ່ສູ້ຊົນ, ບຸກບືນສ້າງຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ໃນທົ່ວຂະແໜງ ໂຍທາທິການ ແລະ ຂົນສົ່ງ ເຂົ້າສູ່ລວງເລິກ ໃນການຈັດຕັ້ງປະຕິບັດວຽກງານຮອບດ້ານ ໃຫ້ມີຜົນສໍາເລັດຕົວຈິງ ຕາມເນື້ອໃນຂໍ້ແຂ່ງຂັນທີ່ສູນກາງວາງອອກ ຄື: ເຮັດໃຫ້ໄວ, ເຮັດໃຫ້ດີ, ເຮັດໃຫ້ຫຼາຍ, ເຮັດໃຫ້ຖືກກົດໝາຍ; ເພື່ອຜັນຂະຫຍາຍເນື້ອໃນ ຂໍ້ແຂ່ງຂັນດັ່ງກ່າວນີ້ ຂະແໜງ ຍທຂ ຈຶ່ງໄດ້ວາງຂໍ້ແຂ່ງຂັນຂະແໜງການຂອງຕົນ ຕິດພັນກັບການຈັດຕັ້ງຜັນຂະຫຍາຍວຽກງານ 3 ສ້າງ ເປັນການແຂ່ງຂັນກັນລະຫວ່າງບັນດາກົມຂອງກະຊວງ ຍທຂ ກັບບັນດາພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ຊຶ່ງມີເນື້ອໃນ ດັ່ງນີ້:

I. ຈຸດປະສົງ-ຄາດໝາຍ.

1.ເພື່ອປຸກລະດົມເຕົ້າໂຮມກໍາລັງແຮງຂອງທຸກພາກສ່ວນ ໃນທົ່ວຂະແໜງ ຍທຂ, ເຊີດຊູມູນເຊື້ອຮັກຊາດ, ນໍ້າໃຈດຸໝັ່ນ, ປະຫຍັດ, ຊື່ສັດ, ອົດທົນ, ປະດິດສ້າງ ແລະ ເປັນເຈົ້າການປະຕິບັດໜ້າທີ່ການເມືອງ ທີ່ການຈັດຕັ້ງມອບໝາຍໃຫ້ແຕ່ລະໄລຍະ ໃຫ້ປະກົດຜົນເປັນຈິງ.

2. ເພື່ອເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງຂອງ ສະມາຊິກພັກ, ພະນັກງານ-

ລັດຖະກອນ ໃນທົ່ວຂະແໜງ ຍທຂ ເຂົ້າໃນການພັດທະນາຂະແໜງ ຍທຂ ເພື່ອປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງຂຶ້ນໄປເລື້ອຍໆ.

3. ເພື່ອປະຕິບັດຄາດໝາຍລວມຂອງການແຂ່ງຂັນ ທີ່ສູນກາງໄດ້ວາງອອກ ຄື: ເຮັດໃຫ້ໄວ, ເຮັດໃຫ້ດີ, ເຮັດໃຫ້ຫຼາຍ ແລະ ເຮັດໃຫ້ຖືກກົດໝາຍ ໃຫ້ປະກົດຜົນເປັນຈິງ ໃນຂະແໜງ ຍທຂ.

4. ເພື່ອຫັນເອົາວຽກງານແຂ່ງຂັນ-ຍ້ອງຍໍ ເຂົ້າສູ່ຂະບວນການເຄື່ອນໄຫວວຽກງານ, ເຮັດໃຫ້ການແຂ່ງຂັນ-ຍ້ອງຍໍຕິດພັນກັບເນື້ອໃນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ແລະ ວຽກງານ 3 ສ້າງ ເຂົ້າສູ່ລວງເລິກໃນທົ່ວຂະແໜງ ຍທຂ ໃນຂອບເຂດທົ່ວປະເທດ.

II. <u>ເນື້ອໃນຂໍ້ແຂ່ງຂັນ.</u>

1. <u>ດ້ານການເມືອງ-ແນວຄິດ.</u>

- ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຂື້ນກັບທຸກກອງໃນທົ່ວຂະແໜງ ຍທຂ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ເຮັດໃຫ້ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍ ແລະ ການນຳພາຂອງ ພັກ-ລັດ ຢ່າງເລິກເຊິ່ງ, ມີຄວາມອຸ່ນອຽນໃນການປະຕິບັດໜ້າທີ່ວຽກງານ ແລະ ການດຳລົງຊີວິດ.

- ເພີ່ມທະວີຝຶກຝົນຫລໍ່ຫຼອມ ພະນັກງານ-ສະມາຊິກພັກ, ລັດຖະກອນຂອງຕົນ ໃຫ້ມີຄຸນທາດການເມືອງ, ມີຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງ ແລະ ມີຈັນຍາບັນໃນການປະຕິບັດໜ້າທີ່ວຽກງານ; ຕ້ານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ລົ້ລາດບັງຫຼວງຢ່າງເຂັ້ມງວດ.

- ເພີ່ມທະວີການຈັດຕັ້ງປະຕິບັດແບບແຜນວິທີນຳພາ, ແບບແຜນວິທີເຮັດວຽກຕາມຫຼັກການຂອງພັກ, ສ້າງໃຫ້ມີຄວາມສາມັກຄີພາຍໃນກົມກອງໃຫ້ແໜ້ນແຟ້ນ.

2. <u>ດ້ານວິຊາສະເພາະ.</u>

- ຮັບປະກັນການປະຕິບັດວຽກງານວິຊາສະເພາະ ຢູ່ທຸກຂົງເຂດວຽກງານໃນຂະແໜງ ຍທຂ ໃຫ້ສຳເລັດຕາມຄາດໝາຍ ຫຼື ລື່ນຄາດໝາຍ; ຮັບປະກັນດ້ານຄຸນນະພາບ, ລາຄາ ແລະ ກຳນົດເວລາຕາມມາດຕະຖານເຕັກນິກການອອກແບບ, ການຄິດໄລ່ລາຄາ ແລະ ກຳນົດເວລາ ທີ່ກຳນົດໄວ້ໃນສັນຍາ ທີ່ໄດ້ຮັບຮອງເອົາໄວ້ແລ້ວນັ້ນ.

- ຕັ້ງໜ້າປະຕິບັດວຽກງານ 3 ສ້າງ ຕາມການແບ່ງຄວາມຮັບຜິດຊອບວຽກງານວິຊາສະເພາະທີ່ໄດ້ເຊັນຮັບຮອງນຳກັນແລ້ວນັ້ນ ໃຫ້ສຳເລັດຕາມແຜນການ ຫຼື ລື່ນແຜນການ ແລະ ມີຄຸນນະພາບດີ.

- ຕັ້ງໜ້າປະຕິບັດ ວິໄນແຜນການ-ວິໄນການເງິນ ໃນຂະບວນການປະຕິບັດວຽກງານວິຊາສະເພາະ ຂອງແຕ່ລະກົມກອງໃຫ້ຖືກຕ້ອງຕາມກົດໝາຍ, ນິຕິກຳລຸ່ມກົດໝາຍວາງອອກຢ່າງເຂັ້ມງວດ. ສຸມໃສ່ແກ້ໄຂ 19 ບັນຫາ ຂອງຂະແໜງ ຍທຂ ໄດ້ຖືກແກ້ໄຂ (ເຖິງປີ 2020 ໃຫ້ສາມາດແກ້ໄຂໄດ້ 85%).

- ຕັ້ງໜ້າສ້າງລາຍຮັບວິຊາການຂອງກະຊວງ ໃຫ້ໄດ້ລື່ນຄາດໝາຍໃນແຕ່ລະປີ.

- ຕັ້ງໜ້າເອົາໃຈໃສ່ແກ້ໄຂຜົນການກວດສອບປະຈຳປີ ຂອງຄະນະກວດສອບແຫ່ງລັດ ທີ່ຄົງຄ້າງ ຈຳນວນ 23 ຂໍ້ ຂອງບັນດາກົມ, ສະຖາບັນ, ກອງວິຊາການ ອ້ອມຂ້າງກະຊວງ, ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ໃນໄລຍະຜ່ານມາ ໃຫ້ໄດ້ສຳເລັດຂາດຕົວ ໃນປີ 2020.

- ຕັ້ງໜ້າຈັດຕັ້ງປະຕິບັດການປະຫຍັດແຫ່ງຊາດ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 09/ນຍ, ລົງວັນທີ 19/05/2017 ຢ່າງເຂັ້ມງວດ, ເດັດຂາດບໍ່ສ້າງໜີ້ສິນ ໃຫ້ແກ່ເງິນງົບປະມານບໍລິຫານວິຊາການໃນແຕ່ລະປີ.

3. ດ້ານພັດທະນາກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ.

- ຕັ້ງໜ້າປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດສົມເຫດສົມຜົນຮັບປະກັນຄວາມເຂັ້ມແຂງສັກສິດ ຕາມຄຳສັ່ງ ເລກທີ 03/ນຍ, ລົງວັນທີ 09/02/2018; ຄົ້ນຄວ້າກຳນົດຕຳແໜ່ງງານຂອງແຕ່ລະກົມກອງຕາມທິດຜູ້ໜຶ່ງຮັບຜິດຊອບຫຼາຍໜ້າວຽກ, ແຕ່ຕ້ອງຮັບປະກັນຄຸນນະພາບຂອງວຽກທີ່ຖືກມອບໝາຍ.

- ເອົາໃຈໃສ່ປັບປຸງສັບຊ້ອນພະນັກງານ-ລັດຖະກອນ ເຂົ້າໃສ່ຕຳແໜ່ງງານທີ່ກຳນົດ ໃຫ້ຖືກຕ້ອງຕາມຄວາມຮູ້, ຄວາມສາມາດ, ຖືກຕາມວິຊາສະເພາະ, ມີປະສົບການ ແລະ ໃຫ້ມີສາມລຸ້ນເພື່ອສືບທອດດ້ານວິຊາການ.

- ຄົ້ນຄວ້າປະສານສົມທົບ, ສະເໜີສັບຊ້ອນແຕ່ງຕັ້ງພະນັກງານ-ລັດຖະກອນເຂົ້າໃສ່ ຕຳແໜ່ງບໍລິຫານໃນກົມກອງຕົນ ໃຫ້ໄດ້ຕາມມາດຕະຖານ, ເງື່ອນໄຂ ທີ່ດຳລັດຂອງລັດຖະບານ ເລກທີ 461/ລບ, ລົງວັນທີ 09/10/2012 ກຳນົດອອກ.

- ເອົາໃຈໃສ່ບຳລຸງ, ກໍ່ສ້າງພະນັກງານ ໃຫ້ສົມຄູ່ກັບຄວາມຕ້ອງການວິຊາສະເພາະແຕ່ລະບ່ອນທັນລົງຊ່ວຍທ້ອງຖິ່ນ ຕາມທິດ 3 ສ້າງ ເພື່ອຮຽນຮູ້, ຝຶກຝົນຫຼໍ່ຫຼອມບຳລຸງສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດຈາກຂະບວນການເຄື່ອນໄຫວຕົວຈິງ ຢູ່ທ້ອງຖິ່ນຮາກຖານ ເພື່ອສ້າງໃຫ້ກາຍເປັນພະນັກງານຫຼັກແຫຼ່ງ ມີທັດສະນະຫຼັກໝັ້ນຮູ້ນຳພາ, ມີຄວາມຈົ່ງຮັກພັກດີຕໍ່ພັກ, ຕໍ່ລັດ, ຕໍ່ການຈັດຕັ້ງ ກາຍເປັນພະນັກງານສືບທອດນຳພາ-ຄຸ້ມຄອງ ໂດຍທັນເປັນໜຸ່ມເທື່ອລະກ້າວ.

4. ດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

- ຕັ້ງໜ້າເປັນເຈົ້າການ ມີສະຕິຕື່ນຕົວເຂົ້າຮ່ວມໃນວຽກງານປ້ອງກັນຄວາມສະຫງົບ ເພື່ອເຮັດໃຫ້ການຈັດຕັ້ງ ແລະ ພະນັກງານ, ລັດຖະກອນມີຄວາມສະຫງົບ-ປອດໄພ ແລະ ຮັບປະກັນການປະຕິບັດໜ້າທີ່ວຽກງານໃຫ້ມີຜົນສຳເລັດ.

- ເອົາໃຈໃສ່ສຶກສາອົບຮົມສ້າງສະຕິ ໃຫ້ພະນັກງານ-ລັດຖະກອນ ມີສະຕິເຄົາລົບປະຕິບັດລະບຽບກົດໝາຍຂອງລັດ, ບັນດາກົດໝາຍ ແລະ ລະບຽບການຂອງຂະແໜງ ຍທຂ ຢ່າງເຂັ້ມງວດ.

III. ວິທີຈັດຕັ້ງປະຕິບັດ.

1. ຄະນະພັກ, ຄະນະນຳ ຂອງຫ້ອງການ, ກົມ, ສະຖາບັນ, ກອງວິຊາການ, ລັດວິສາຫະກິດທີ່ຂຶ້ນກັບກະຊວງ ຍທຂ, ພະແນກ ຍທຂ ແຂວງ-ນະຄອນຫຼວງວຽງຈັນ ເປັນເຈົ້າການຄົ້ນຄວ້າເຊື່ອມຊຶມເນື້ອໃນຂໍ້ແຂ່ງຂັນສະບັບນີ້ ແລ້ວນຳໄປຜັນຂະຫຍາຍ, ນຳພາຈັດຕັ້ງປະຕິບັດຢູ່ໃນກົມກອງຂອງຕົນໃຫ້ປະກົດຜົນເປັນຈິງ, ໂດຍມີການແບ່ງຄວາມຮັບຜິດຊອບພາຍໃນຄະນະເພື່ອຊີ້ນຳ ແລະ ບຸກຄົນໃຫ້ຮັບຜິດຊອບ ແຕ່ລະວຽກຢ່າງຈະແຈ້ງ ຕິດພັນກັບການມອບສິດຕັດສິນຕົກລົງໃຫ້ຂາດຕົວຕາມຄວາມຮູ້, ຄວາມສາມາດຕົວຈິງ.

2. ໃຫ້ແຕ່ລະກົມ, ກອງ ທີ່ຂຶ້ນກັບກະຊວງ ຍທຂ, ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ເປີດຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ຕິດພັນກັບການຈັດຕັ້ງ ການຜັນ

ຂະຫຍາຍວຽກງານ 3 ສ້າງ ໃຫ້ສຳເລັດໂດຍໄວ; ໂດຍມອບໃຫ້ຄະນະຮັບຜິດຊອບວຽກງານແຂ່ງຂັນ-ຍ້ອງຍໍ ແຕ່ລະຂັ້ນ ແລະ ໜ່ວຍງານກອງເລຂາຊ່ວຍວຽກຕ້ອງມີແຜນຕາຕະລາງການຕິດຕາມ, ຊຸກຍູ້ ປຸກລະດົມ ໃນການຈັດຕັ້ງປະຕິບັດ ແລະ ມີການສະຫຼຸບຕີລາຄາ, ຖອດຖອນບົດຮຽນແຕ່ລະໄລຍະ ແລ້ວລາຍງານຂໍທິດຊີ້ນຳຈາກຄະນະນຳຕົນ ໃຫ້ເປັນປົກກະຕິທັນເວລາ.

3. ຖືເອົາຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ຄັ້ງນີ້ ເປັນການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າ ຂອງບັນດາຄະນະພັກ, ສະມາຊິກພັກ ແລະ ພະນັກງານ, ລັດຖະກອນ ຢູ່ໃນຂະແໜງ ຍທຂ ໃຫ້ສູງຂຶ້ນ.

4. ກຳນົດເວລາສ້າງຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ແມ່ນເລີ່ມແຕ່ເດືອນ 4 ປີ 2019 ໄປ ຮອດຕົ້ນເດືອນ 3 ປີ 2020, ໃຫ້ດຳເນີນການຕີລາຄາປະເມີນຜົນ ແລະ ສະຫຼຸບຖອດຖອນບົດຮຽນ ແລະ ຍ້ອງຍໍການຈັດຕັ້ງປະຕິບັດ ໃນຮອບ 1 ປີ ແລ້ວຈຶ່ງເປີດຂະບວນການແຂ່ງຂັນໃໝ່ ໃນປີຕໍ່ໄປ.

ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ